**ມິຊຊາອາທິດທີ 7 ກຳນົດທຳມະດາ ປີ C**

**ວັນທີ 24 ກຸມພາ 2019**



**ພຣະວໍລະສານໂດຍນັກບຸນລູກາ 6, 27-38**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວວ່າ: ເຮົາບອກພວກເຈົ້າທີ່ກຳລັງຟັງເຮົາຢູ່ດຽວນີ້ວ່າ: ຈົ່ງຮັກສັດຕູ, ຈົ່ງທຳດີຕໍ່ຜູ້ກຽດຊັງພວກເຈົ້າ. ຈົ່ງອວຍພອນໃຫ້ຜູ້ທີ່ດ່າວ່າພວກເຈົ້າ. ຈົ່ງພາວະນາອຸທິດໃຫ້ຜູ້ທີ່ບັງບຽດພວກເຈົ້າ. ຜູ້ໃດຕົບແກ້ມເຈົ້າເບື້ອງໜຶ່ງ ກໍຈົ່ງປິ່ນອີກເບື້ອງໜຶ່ງໃຫ້ເຂົາຕົບ. ຜູ້ໃດເອົາເສື້ອຕຸ້ມຂອງເຈົ້າໄປ ກໍຢ່າຫວງໃຫ້ເຂົາເອົາເສື້ອໃນໄປດ້ວຍ. ໃຜຂໍຫຍັງກໍຈົ່ງເອົາໃຫ້. ໃຜເອົາຂອງເຈົ້າໄປກໍຢ່າທວງຄືນ. ພວກເຈົ້າຢາກໃຫ້ຄົນທັງຫລາຍທຳຕໍ່ພວກເຈົ້າແນວໃດ ກໍຈົ່ງທຳຕໍ່ພວກເຂົາແນວນັ້ນ. ຖ້າພວກເຈົ້າຮັກຄົນທີ່ຮັກພວກເຈົ້າແລ້ວ ພວກເຈົ້າຈະໄດ້ຮັບຄຸນປະໂຫຍດຫຍັງ? ຍ້ອນວ່າຄົນບາບກໍຮັກຜູ້ທີ່ຮັກເຂົາດັ່ງດຽວກັນ. ຖ້າພວກເຈົ້າທຳດີຕໍ່ຜູ້ທີ່ທຳດີຕໍ່ພວກເຈົ້າແລ້ວ ພວກເຈົ້າຈະໄດ້ຮັບຄຸນປະໂຫຍດຫຍັງ? ພວກຄົນບາບກໍທຳດັ່ງດຽວກັນ. ຖ້າພວກທ່ານໃຫ້ຢືມແກ່ຜູ້ທີ່ພວກທ່ານຫວັງວ່າຈະໄດ້ຄືນແລ້ວ ພວກທ່ານຈະໄດ້ຄຸນປະໂຫຍດຫຍັງ? ພວກຄົນບາບກໍໃຫ້ໝູ່ພວກຄົນບາບຢືມ ເພື່ອຫວັງຈະໄດ້ຮັບຕອບແທນເໝືອນກັນ. ສ່ວນພວກເຈົ້າ ຈົ່ງຮັກສັດຕູ. ຈົ່ງທຳດີແລະໃຫ້ຢືມໂດຍບໍ່ຫວັງຈະໄດ້ຫຍັງຕອບແທນ. ພວກເຈົ້າຈະໄດ້ຮັບລາງວັນອັນຍິ່ງໃຫຍ່ແລະຈະເປັນບຸດຂອງພຣະເຈົ້າຜູ້ສູງສຸດ. ຍ້ອນວ່າພຣະອົງຊົງພໍພຣະໄທດີຕໍ່ຄົນອະກະຕັນຍູແລະຄົນບໍ່ດີດ້ວຍ.

ຈົ່ງເມດຕາກາລຸນາຄືພຣະບິດາຂອງພວກເຈົ້າຊົງເມດຕາກາລຸນາເຖີດ. ຢ່າພິພາກສາແລ້ວພວກເຈົ້າຈະບໍ່ຖືກພິພາກສາ. ຢ່າຕັດສິນແລ້ວພວກເຈົ້າຈະບໍ່ຖືກຕັດສິນ. ຈົ່ງໃຫ້ອະໄພແລະເຂົາກໍຈະໃຫ້ອະໄພແກ່ພວກເຈົ້າ. ຈົ່ງໃຫ້ເຂົາ ແລະເຂົາຈະໃຫ້ພວກເຈົ້າ. ເຂົາຈະຕິດຕວງໃສ່ໄຖ່ໃຫ້ພວກເຈົ້າເຕັມຂະໜາດ ທັງແໜ້ນຈົນເຕັມລົ້ນອອກມາ. ຍ້ອນວ່າພວກເຈົ້າຕິດຕວງໃຫ້ເຂົາແນວໃດ ເຂົາກໍຈະຕິດຕວງໃຫ້ພວກເຈົ້າແນວນັ້ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 6, 27-38**

ຄຳເທດສອນຂອງພຣະເຢຊູເຈົ້າວັນນີ້ສືບຕໍ່ຈາກບົດເທດສອນຂອງວັນອາທິດທີ່ຜ່ານມາກ່ຽວກັບບຸນມະຫາລາບຊຶ່ງພຣະເຢຊູເຈົ້າໄດ້ກ່າວກັບພວກລູກສິດແລະຝູງຊົນທີ່ມາຟັງພຣະອົງ. ແຕ່ວາຈາຂອງພຣະເຈົ້າວັນນີ້ມີຄວາມກ່ຽວຄ້ອງກັນຢ່າງໃດກັບບຸນມະຫາລາບຊຶ່ງພຣະເຢຊູເຈົ້າໄດ້ສອນພວກເຮົາໃນອາທິດທີ່ຜ່ານມາ? ແນ່ນອນ, ຄວາມຮູ້ສຶກທຳອິດເມື່ອພວກເຮົາອ່ານແລະຟັງວາຈາຂອງພຣະເຈົ້າວັນນີ້ຄືສິ່ງທີ່ພຣະເຢຊູເຈົ້າຮ້ອງຂໍໃຫ້ພວກເຮົາປະຕິບັດນັ້ນບໍ່ໄດ້ງ່າຍເລີຍ. ເພາະຕ້ອງຮັກສັດຕູ, ໃຫ້ອະໄພແກ່ສັດຕູ ແລະຍັງພາວະນາໃຫ້ສັດຕູອີກດ້ວຍ. ເທົ່ານັ້ນຍັງບໍ່ພໍ, ຖ້າຜູ້ໃດຕົບແກ້ມເບື້ອງໜຶ່ງ ກໍຈົ່ງປິ່ນອີກເບື້ອງໃຫ້ເຂົາຕົບ. ມີໃຜໃນພວກເຮົາສາມາດປະຕິບັດສິ່ງທີ່ພຣະເຢຊູເຈົ້າກ່າວມານັ້ນໄດ້ບໍ? ເປັນຫຍັງພຣະເຢຊູເຈົ້າຈຶ່ງສອນສິ່ງທີ່ຍາກແບບນີ້ໃຫ້ພວກເຮົາ? ຍ້ອນພຣະເຈົ້າຂອງພວກເຮົາເປັນອົງແຫ່ງຄວາມຮັກ. ແລະກໍບໍ່ມີບັນຍັດໃດຍິ່ງໃຫຍ່ເທົ່າບັນຍັດແຫ່ງຮັກ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງສອນພວກເຮົາຜູ້ເປັນລູກສິດຂອງພຣະອົງແລະເປັນລູກຂອງພຣະບິດາເຈົ້າສະຫວັນວ່າ: « ຈົ່ງເມດຕາການລຸນາ ຄືພຣະບິດາຂອງພວກເຮົາຊົງເມດຕາກາລຸນາ ». ໝາຍວ່າຈົ່ງປ່ຽນດວງໃຈຂອງພວກເຮົາທີ່ເປັນກ້ອນຫີນໃຫ້ເປັນກ້ອນຊີ້ນ. ຈົ່ງປ່ຽນດວງໃຈຂອງພວກເຮົາທີ່ຂັບແຄບ, ອິດສາ, ໂມໂຫ, ໂກດຮ້າຍ ໃຫ້ເປັນດວງໃຈທີ່ເຕັມດ້ວຍຄວາມຮັກແລະການໃຫ້ອະໄພຄືກັບດວງພຣະໄທຂອງພຣະບິດາເຈົ້າສະຫວັນ.

ຄຳວ່າສັດຕູທີ່ພຣະເຢຊູເຈົ້າກ່າວໃນວັນນີ້, ພວກເຮົາອາດຈະຄິດວ່າແມ່ນຜູ້ທີ່ຫວັງຮ້າຍແລະທຳລາຍພວກເຮົາ. ແຕ່ພວກເຮົາລືມໄປວ່າທຸກຄັ້ງທີ່ພວກເຮົາກະທຳບາບແລະຕັດຂາດຈາກພຣະເຈົ້ານັ້ນພວກເຮົາກໍເປັນສັດຕູກັບພຣະອົງ. ແລະຖ້າພວກເຮົາຢາກໃຫ້ພຣະເຈົ້າອະໄພແກ່ພວກເຮົາ ພວກເຮົາກໍຕ້ອງຮູ້ຈັກໃຫ້ອະໄພແກ່ຜູ້ທີ່ເປັນສັດຕູຂອງພວກເຮົາ. ດັ່ງທີ່ພວກເຮົາວອນຂໍທຸກຄັ້ງເມື່ອພວກເຮົາສວດບົດໂອພຣະບິດາຂອງຂ້າພະເຈົ້າທັງຫລາຍ : « ຂໍຍົກໂທດໂຜດຜິດໃຫ້ພວກຂ້າພະເຈົ້າ ຄືພວກຂ້າພະເຈົ້າໂຜດໃຫ້ຄົນອື່ນ ». ເຖິງຢ່າງໃດກໍຕາມ, ບັນຍັດແຫ່ງຮັກກໍບໍ່ແມ່ນສິ່ງທີ່ບໍ່ງ່າຍສະເໝີໄປ ແຕ່ກໍບໍ່ໝາຍຄວາມວ່າເປັນໄປບໍ່ໄດ້. ເພາະພວກເຮົາມີພຣະເຈົ້າຢູ່ຄຽງຂ້າງແລະຊ່ວຍຊູພວກເຮົາຢູ່ສະເໝີ ຖ້າພວກເຮົາເປີດໃຈຮັບເອົາພຣະອົງ.

ບຸນມະຫາລາບທີ່ພຣະເຢຊູເຈົ້າສອນໃນອາທິດຜ່ານມາຈະເປັນບຸນເປັນຄວາມສຸກຂອງພວກເຮົາຢ່າງແທ້ຈິງກໍຕໍ່ເມື່ອພວກເຮົາມີດວງໃຈເມດຕາກາລຸນາຮູ້ຈັກໃຫ້ອະໄພເໝືອນກັບພຣະບິດາເຈົ້າສະຫວັນທີ່ມີຄວາມເມດຕາກາລຸນາຕໍ່ພວກເຮົາທຸກຄັ້ງທີ່ພວກເຮົາຕົກຢູ່ໃນບາບ. ຫລືເວົ້າອີກຢ່າງໜຶ່ງ ວາຈາຂອງພຣະເຈົ້າວັນນີ້ເປັນພາກປະຕິບັດຂອງຄຳເທດສອນກ່ຽວກັບບຸນມະຫາລາບ. ແລະໝາກຜົນທີ່ພວກເຮົາໄດ້ຮັບຈາກການປະຕິບັດຄຳສອນຂອງພຣະເຈົ້າວັນນີ້ຄືຄວາມສຸກຢູ່ໃນດວງໃຈແລະໃນຊີວິດຂອງພວກເຮົານັ້ນເອງ. ຂໍໃຫ້ພວກເຮົາທຸກຄົນຈົ່ງເປັນຜູ້ມີຄວາມເມດຕາກາລຸນາເໝືອນກັບພຣະບິດາເຈົ້າຂອງພວກເຮົາເປັນຜູ້ເມດຕາກາລຸນານັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ